ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

------===000===------

ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ
628 ບ້ານ: ໂພນພະເນົາ ກມ5
ຖະໜົນ: ໄກສອນພົມວິຫານ ເມືອງ: ໄຊເສດຖາ
ນະຄອນຫຼວງວຽງຈັນ ໂທ-ແຟັກ:(+856 21)418062 – 6

ເລກທີ: 0170/21 - /ມຫທຊ
ນະຄອນຫຼວງວຽງຈັນ, ວັນທີ: 25 ສິງຫາ 2021

ໜັງສືຊີ້ແຈງ

ຮຽນ: ທ່ານ ຫົວໜ້າສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ;
ທ່ານ ຜູ້ອຳນວຍການໃຫຍ່ຕະຫຼາດຫຼັກຊັບລາວ;
ບັນດາຜູ້ຖືຮຸ້ນ ຂອງບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ

ເລື່ອງ: ຜົນການດຳເນີນການແຕກຮຸ້ນ (Stock split) ໂດຍປ່ຽນແປງມູນຄ່າກຳນົດຕໍ່ຮຸ້ນ ຈາກ 1.000 ກີບ ເປັນ 100 ກີບ

- ອີງຕາມ ການເປີດເຜີຍຂໍ້ມູນບົດລາຍງານຜົນການດຳເນີນທຸລະກິດ ປະຈຳ 6 ເດືອນຕົ້ນປີ 2021

ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ (ມຫທຊ) ຂໍຖືເປັນກຽດຊີ້ແຈງມາຍັງທ່ານໃຫ້ຊາບວ່າ ບໍລິສັດໄດ້ດຳເນີນການແຕກຮຸ້ນ (Stock split) ໂດຍປ່ຽນແປງມູນຄ່າກຳນົດຕໍ່ຮຸ້ນ ຈາກ 1,000 ກີບ ມາ ເປັນ 100 ກີບໂດຍໄດ້ຮັບອະນຸມັດແກ້ໄຂລະບຽບບໍລິສັດຈາກກະຊວງອຸດສາຫະກຳ ແລະ ການຄ້າ ແລ້ວ ເມື່ອວັນທີ 24 ມິຖຸນາ 2021 ຕາມລາຍລະອຽດດັ່ງນີ້:

	ກ່ອນການປ່ຽນແປງ (ເດີມ)	ຫຼັງການປ່ຽນແປງ (ໃຫມ່)
ມູນຄ່າກຳນົດ (Par Value) ຕໍ່ຮຸ້ນ	1,000 ກີບ	100 ກີບ
ຈຳນວນຮຸ້ນທັ້ງໝົດຂອງບໍລິສັດ	40,000,000 ຮຸ້ນ	400,000,000 ຮຸ້ນ
ທຶນຈົດທະບຽນ	40,000,000,000 ກີບ	40,000,000,000 ກີບ

ບໍລິສັດ ໄດ້ດຳເນີນການຈັດເຮັດໜັງສືແຈ້ງການແຕກຮຸ້ນ (Stock split) ສຳເລັດແລ້ວຕໍ່ຕະຫຼາດຫຼັກຊັບລາວແລ້ວ ເມື່ອວັນທີ 28 ມິຖຸນາ 2021 ເຊິ່ງປະຈຸບັນຕະຫຼາດຫຼັກຊັບລາວຢູ່ໃນຂັ້ນຕອນດຳເນີນການແຕ່ຍັງ ບໍ່ສຳເລັດ ດັ່ງນັ້ນຈຳນວນຮຸ້ນທີ່ທຳການ ຊື້-ຂາຍ ໃນລະບົບ Trading ຂອງຕະຫຼາດຫຼັກຊັບລາວ ຈຶ່ງຍັງຄົງ ມີມູນຄ່າກຳນົດ (Par Value) ຮຸ້ນລະ 1,000 ກີບ

ທັ້ງນີ້ ບໍລິສັດ ໄດ້ເຮັດການເປີດເຜີຍ ບົດລາຍງານຜົນການດຳເນີນທຸລະກິດ ປະຈຳ 6 ເດືອນ ຕົ້ນປີ 2021 ຜ່ານລະບົບເປີດເຜີຍຂໍ້ມູນຂອງຕະຫຼາດຫຼັກຊັບລາວ ໃນວັນທີ 25 ສິງຫາ 2021 ໂດຍບົດລາຍງານ ໄດ້ລະບຸມູນຄ່າກຳນົດ (Par Value) ຮຸ້ນລະ 100 ກີບ ແລະ ມີຈຳນວນຮຸ້ນທີ່ 400,000,000 ຮຸ້ນ ຈຶ່ງບໍ່ ກົງກັບຂໍ້ມູນທີ່ລະບຸໄວ້ໃນລະບົບ Trading ຂອງຕະຫຼາດຫຼັກຊັບລາວ ຫາກເມື່ອຕະຫຼາດຫຼັກຊັບລາວ ດຳ ເນີນການແຕກຮຸ້ນ (Stock Split) ສຽບຮ້ອຍແລ້ວ ມູນຄ່າກຳນົດ (Par Value) ແລະ ຈຳນວນຮຸ້ນ ກໍ່ ຈະຖືກປັບປ່ຽນໃນລະບົບໂດຍອັດຕະໂນມັດ ສຳລັບຈຳນວນຮຸ້ນຂອງຜູ້ຖືຮຸ້ນກໍ່ຈະປັບປ່ຽນໂດຍ ອັດຕະໂນມັດເຊັ່ນກັນ ຕົວຢ່າງ: ຫາກຜູ້ຖືຮຸ້ນມີຮຸ້ນຢູ່ຈຳນວນ 100 ຮຸ້ນ ພາຍຫຼັງຈາກຕະຫຼາດຫຼັກຊັບ ລາວດຳເນີນການແຕກຮຸ້ນ (Stock split) ສຽບຮ້ອຍແລ້ວ ຈຳນວນຮຸ້ນກໍ່ຈະປ່ຽນເປັນ 1,000 ຮຸ້ນ ເປັນຕົ້ນ

ດັ່ງນັ້ນ, ຈຶ່ງຂໍຊີ້ແຈງມາຍັງທ່ານ ເພື່ອຮັບຊາບດ້ວຍ.

ຜູ້ອຳນວຍການໃຫ່ຍ

(ທ່ານ ມານົບ ຕຣີລິດວິໄລ)